*Souphanouvong University Journal of Multidisciplinary Research and Development*
**2024,Vol. 8, No. 2, 78-87**
**https://doi.org/10.69692/SUJMRD080278**

# Study on Factors Affecting Households' Income Generation from Natural Dyed Cotton Handicaft Production in Songkhone District, Savannakhet Province

**Thongsa TOUNMANYSONE*, Lidsada BANMANIVONG, Somphone VONGKEO, Bounpasong XAIYAPHONE, Douangpheng SENGHEUANGSOMPHOU, Soulang LATSAVAT and Soksay MONEPADITH**

*Department of Finance and Banking, Faculty of Business Administration, Savannakhet University, Lao PDR*

***Corresponding author:***

*Thongsa TOUNMANYSONE*

*Department of Finance and Banking, Faculty of Business Administration, Savannakhet University*

*Tel: +85620 2268 1010,*

*E-mail:*

*Thongsa1984@hotmail.com*

***Article Info:***
*Submitted: Feb 17, 2022*
*Revised: Jun 02, 2022*
*Accepted: Jun 21, 2022*

## Abstract

The purpose of this study was to find out the factors that affect households' income generation from natural dyed cotton handicraft (NDCH) production in Songkhone District, Savannakhet Province. The researcher used cross-sectional data collected from a sample of 256 households in Songkhone district, Savannakhet province in 2021. The estimates are based on the regression model (Ordinary Least Square: OLS) and the econometrics analysis is based on the model constructed by Souphaphone (2020). The results of this study showed that NDCH production can generate households' income at an average of 6.992.109 kip/household/month and the factors that have an effect on households' income generation from NDCH production (statistically significant) have 5 factors, including experience, labour, market, and Laoskirt (Sinh) have positive impact on household's income generation. But training has a negative impact on a household's income generation. Therefore, policymakers should recognize that NDCH production can generate households' income and also have a significant impact on the strategy of creating jobs and promoting Lao culture. This study is an important case study to explore the factors affecting households' income generation from NDCH production in Savannakhet, Lao PDR.

**Keywords:** *Natural dyed cotton handicraft, Household's Income, Songkone District*

## 1. ພາກສະເໜີ

ການຜະລິດຜ້າຝ້າຍຢູ່ໃນ ສປປ ລາວ ດັ້ງເດີມແມ່ນວຽກຂອງຊົນເຜົ່າຕ່າງໆເຊັ່ນ: ລື້, ໄທດຳ, ຜູ້ໄທ ແລະ ອື່ນໆ ໂດຍສ່ວນໃຫຍ່ແມ່ນເປົ້າໝາຍຜະລິດເພື່ອໃຊ້ເອງ. ພື້ນທີ່ການຜະລິດທີ່ສຳຄັນແມ່ນຢູ່ໃນເຂດພາກເໜືອຂອງປະເທດຢູ່ໃນແຂວງຫົວພັນ, ອຸດົມໄຊ, ຫຼວງພະບາງ, ຫຼວງນ້ຳທາ, ຜົ້ງສາລີ, ແລະ ໄຊຍະບູລີ. ແນວໃດກໍ່ຕາມ, ຍັງມີພື້ນທີ່ການຜະລິດຢູ່ໃນແຂວງສະ ຫວັນນະເຂດ ແລະ ຈຳປາສັກລຽບຕາມລຳແມ່ນ້ຳຂອງໃນພາກກາງ ແລະ ພາກໃຕ້ຂອງລາວ. ການຜະລິດດັ່ງກ່າວແມ່ນໄດ້ຖືກຍ້ອມເປັນສີຄາມ ຫຼື ສີດຳທີ່ມີສີຄົມ ແລະ ສີຍ້ອມຜ້າຊະນິດອື່ນ ເພື່ອເຮັດເປັນເຄື່ອງນຸ່ງປະຈຳວັນ. ໃນປະຈຸບັນໄດ້ມີຄວາມຕ້ອງການທັງຜ້າຝ້າຍສີຂາວ ແລະ ຍ້ອມສີຄາມ, ແຕ່ການຜະລິດຜ້າຝ້າຍພື້ນເມືອງແມ່ນຍັງສືບຕໍ່ ໂດຍພື້ນຖານແລ້ວພຽງແຕ່ເປັນຫັດຖະກຳຂະໜາດນ້ອຍ (Sonoe, 2005). ໃນປະຈຸບັນເປັນຍຸກແຫ່ງການພັດທະນາໄດ້ເຮັດໃຫ້ມີການຜະ ລິດອອກມາໃນຫຼາຍຮູບແບບ ເພື່ອເປັນສິນຄ້າອອກມາຈຳໜ່າຍ. ອີງຕາມນະໂຍບາຍຂອງລັດຖະບານທີ່ໄດ້ວາງແນວທາງການ

ພັດທະນາບັນດາເຂດແຄວ້ນ ແລະ ທ້ອງຖິ່ນຕ້ອງມີຄວາມສອດຄ່ອງກົມກຽວໂດຍອີງໃສທ່າແຮງໄດ້ປຽບ ແລະ ຈຸດພິເສດຂອງແຕ່ລະພາກ, ແຕ່ລະທ້ອງຖິ່ນ. ກໍານົດເອົາເມືອງ ຫຼື ເຂດທີ່ມີເງື່ອນໄຂ, ມີທ່າແຮງໄດ້ປຽບ ແລະ ມີຄວາມອາດສາມາດ ເພື່ອສ້າງເສດຖະກິດໃນເຂດດັ່ງກ່າວໃຫ້ເປັນແບບຢ່າງທີ່ມີກໍາລັງແຮງໃຫ້ແກ່ບັນດາເມືອງ ແລະ ເຂດອ້ອມຂ້າງອື່ນໆ ເຮັດໃຫ້ໄດ້ຜົນປະໂຫຍດຈາກການພັດທະນາດັ່ງກ່າວ (ກະຊວງແຜນການ ແລະ ການລົງທຶນ, 2016).

ສະຫວັນນະເຂດ ເປັນອີກແຂວງທີ່ມີການພັດທະນາທາງດ້ານເສດຖະກິດ ໂດຍສະເພາະໃນບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ອື່ນໆ. ໂດຍຕັ້ງໜ້າສົ່ງເສີມກຸ່ມຜະລິດ, ຜູ້ຜະລິດສິນຄ້າພູມປັນຍາທ້ອງຖິ່ນພາຍໃນແຂວງ ທີ່ມີເງື່ອນໄຂຜະລິດເປັນສິນຄ້າ (One District One Product: ODOP) ຂອງແຂວງ ໃຫ້ເພີ່ມຂຶ້ນຫຼາຍກວ່າເກົ່າ (ພະແນກແຜນການ ແລະ ການລົງທຶນ, 2021). ໂດຍເລັງໃສ່ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນພາຍໃນເຂດໄດ້ມີວຽກເຮັດງານທໍາທີ່ໝັ້ນຄົງສ້າງລາຍຮັບໄດ້ມີຊີວິດການເປັນຢູ່ ແລະ ສ້າງອາຊີບຄົງທີ່ໃນແຕ່ລະເມືອງ ໂດຍແນ່ໃສ່ສົ່ງເສີມສີໄມ້ລາຍມື ຫຼື ສິ່ງທີ່ເປັນທ່າແຮງຂອງແຕ່ລະທ້ອງຖິ່ນເຊັ່ນ: ເມືອງ ວິລະບູລີ ມີກຸ່ມຜະລິດແຈ່ວນໍ້າຜັກ, ເມືອງ ເຊໂປນ ມີກຸ່ມຕໍ່າແຜ່ນແພລາຍຜູ້ໄທ, ເມືອງອາດສະພອນ ມີກຸ່ມຜະລິດຕະພັນເຄື່ອງປັ້ນດິນເຜົາບ້ານຜັກຂະຫຍ່າ, ນະຄອນໄກສອນພົມວິຫານ ມີກຸ່ມຜະລິດສະໝຸນໄພ, ຊີ້ນສະຫວັນ ແລະ ໝໍ້າສະຫວັນ, ເມືອງສອງຄອນ ມີກຸ່ມຕໍ່າແຜ່ນແພຍ້ອມສີທໍາມະຊາດບ້ານລະຫານໍ້າ ແລະ ບ້ານລະຫາໂຄກ ແລະ ເມືອງ ອຸທຸມພອນ ມີກຸ່ມປີ້ງໄກ່ລາດເຊໂນ. ສໍາລັບການຜະລິດຜ້າຝ້າຍຢູ່ແຂວງສະຫວັນນະເຂດ ມີຈໍານວນ 6 ເມືອງຄືດັ່ງນີ້: ເມືອງສອງຄອນ ມີຜູ້ເຮັດການຜະລິດຢູ່ 10 ບ້ານ ມີ 708 ຄົວເຮືອນ, ເມືອງເຊໂປນ ມີ 7 ບ້ານມີ 215 ຄົວເຮືອນ, ເມືອງຊົນນະບູລີ ມີ 3 ບ້ານມີ 43 ຄົວເຮືອນ, ນະຄອນໄກສອນພົມວິຫານ ມີ 5 ບ້ານ ມີ 12 ຄົວເຮືອນ, ເມືອງນອງ ມີ 1 ບ້ານ 3 ຄົວເຮືອນ ແລະ ເມືອງໄຊບູລີ ມີ 1 ບ້ານ ມີ 4 ຄົວເຮືອນ (ພະແນກອຸດສະຫະກໍາ ແລະ ການຄ້າ, 2019).

ເມືອງສອງຄອນ ແມ່ນເປັນແຫ່ງໜຶ່ງໃນການຜະລິດຜ້າຝ້າຍທີ່ຫຼາຍກວ່າໝູ່ພາຍໃນ ແຂວງສະຫວັນນະເຂດ ເຊິ່ງສະ ແດງເຫັນໄດ້ຈາກຈໍານວນຜູ້ເຮັດການຜະລິດຜ້າຝ້າຍຂອງບ້ານຕ່າງໆຄື: ບ້ານລະຫານໍ້າມີ 340 ຄົວເຮືອນ, ບ້ານທ່າຂາມລຽນ ມີ 130 ຄົວເຮືອນ, ບ້ານແບ່ງຄໍາໄຫຼ 70 ຄົວເຮືອນ, ບ້ານມ່ວງໄຂ່ 58 ຄົວເຮືອນ, ບ້ານລະຫາໂຄກ ມີ 42 ຄົວເຮືອນ, ບ້ານໜອງໄຮ 10 ຄົວເຮືອນ, ບ້ານນາກາລາ ມີ 24 ຄົວເຮືອນ, ບ້ານກຸດຣີ 19 ຄົວເຮືອນ, ບ້ານນາຫັງ ມີ 10 ຄົວເຮືອນ ແລະ ບ້ານຜັກຂະ ມີ 5 ຄົວເຮືອນ ຜູ້ຜະລິດທີ່ກ່າວມາທັງໝົດແມ່ນຜູ້ທີເຮັດຫັດຖະກໍາຕໍາຫູກເປັນອາຊີບ. ປັດຈຸບັນຄວາມຕ້ອງການໃນການນໍາໃຊ້ຜ້າຝ້າຍແມ່ນມີຫຼາຍເຮັດໃຫ້ມີການຜະລິດເພີ່ມຂຶ້ນ ເນື່ອງຈາກໄດ້ຮັບການສົ່ງເສີມຈາກພັກລັດ ການ ນໍາຂັ້ນແຂວງທີ່ຕ້ອງການສ້າງອາຊີບທີ່ໝັ້ນຄົງແກ່ປະຊາຊົນທ້ອງຖິ່ນ ແລະ ສ້າງລາຍຮັບໃຫ້ແກ່ຄອບຄົວຂອງເຂົາເຈົ້າ, ນອກ ຈາກນີ້ຍັງເປັນການຮັກສາວັດທະນະທໍາການຜະລິດທີ່ມີມາແຕ່ສະໄໝບູຮານນະການ, ເອກອ້າງສີໄມ້ລາຍມືທີ່ເປັນເອກະລັກ ແລະ ມີທ່າແຮງໃນການນໍາຜະລິດສິນຄ້າຜ້າຝ້າຍ, ເປັນເມືອງໜຶ່ງທີ່ຂຶ້ນຊື່ໃນການຜະລິດຜ້າຝ້າຍຍ້ອມສີຈາກທໍາມະຊາດທີ່ໃຫຍ່ທີ່ສຸດພາຍໃນແຂວງສະຫວັນນະເຂດ (ຫ້ອງການອຸດສາຫະກໍາ ແລະ ການຄ້າ, 2019)

ດ້ວຍເຫດນີ້ຈຶ່ງຕ້ອງການທີ່ຈະສຶກສາ "ສຶກສາປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນທີ່ເຮັດການຜະລິດຫັດ ຖະກໍາຜ້າຝ້າຍຍ້ອມສີທໍາມະຊາດຂອງປະຊາຊົນພາຍໃນເມືອງສອງຄອນ ແຂວງສະຫວັນນະເຂດ" ເພື່ອຕ້ອງການທີ່ຈະເບິ່ງໃນດ້ານແຫຼ່ງລາຍຮັບໃຫ້ແກ່ຄົວເຮືອນທີ່ມາຈາກການເຮັດການຜະລິດຫັດຖະກໍາຜ້າຝ້າຍ ແລະ ຕ້ອງການທີ່ຈະຊອກຫາປັດໄຈທີ່ສົ່ງຜົນເຮັດໃຫ້ມີການສ້າງລາຍຮັບເຂົ້າສູ່ຄົວເຮືອນຂອງປະຊາຊົນ.

## 2. ອຸປະກອນ ແລະ ວິທີການ

### 2.1 ພື້ນທີ່ການສຶກສາ

ເມືອງສອງຄອນເປັນເມືອງໜຶ່ງຂອງແຂວງສະຫວັນນະເຂດ ຈາກທັງໝົດ 14 ເມືອງ 1 ນະຄອນ, ເຊິ່ງມີທີ່ຕັ້ງຢູ່ເຂດທົ່ງພຽງລຽບແຄມແມ່ນໍ້າຂອງ, ທີ່ມີຊາຍແດນຕິດຈອດກັບ 5 ເມືອງຄື: ທິດເໜືອຕິດຈອດກັບເມືອງໄຊພູທອງ ແລະ ເມືອງຈໍາພອນ, ທິດຕາເວັນອອກຕິດກັບເມືອງຊົນນະບູລີ, ທິດໃຕ້ຕິດກັບເມືອງທ່າປາງທອງ ແລະ ທິດຕາເວັນຕົກຕິດກັບແມ່ນໍ້າຂອງ. ເມືອງສອງຄອນມີເນື້ອທີ່ທັງໝົດແມ່ນ 1,408 $Km^2$, ເມືອງສອງຄອນປະກອບ 95 ບ້ານ, 12 ກຸ່ມບ້ານ, ມີ 19,615 ຫຼັງຄາເຮືອນ, ມີ 17,208 ຄົວເຮືອນ, ມີ 18,871 ຄອບຄົວ, ມີພົນລະເມືອງທັງໝົດ 104,229 ຄົນ, ຍິງ 53,166 ຄົນ ມີຄວາມໜາຂອງ

ປະຊາກອນແມ່ນ 74 ຄົນ/ Km$^2$ , ມີ 3 ເຜົ່າຄື: ເຜົ່າລາວກອມ 81.78%, ເຜົ່າຜູ້ໄທ 17.17% ແລະ ເຜົ່າກະຕາງ 1.05% ແລະ ປະຊາຊົນສ່ວນໃຫຍ່ນັບຖືສາສະໜາພຸດ. ສໍາລັບເສດຖະກິດມີລວມຍອດຜະລິດຕະພັນພາຍໃນ (Gross Domestic Product: GDP)ໃນປີ 2021 ຄາດຄະເນປະຕິບັດໄດ້ 1,778.76 ຕື້ກີບ, ດ້ວຍອັດຕາການຂະຫຍາຍຕົວ 7.15%, ມີໂຄງປະກອບທາງເສດຖະກິດຄື: ຂະແໜງກະສິກໍາກວມເອົາ 64.69% ຂອງ GDP, ອຸດສາຫະກໍາ-ຫັດຖະກໍາກວມເອົາ 24.74% ຂອງ GDP, ຂະແໜງບໍລິການກວມເອົາ 10.57% ຂອງ GDP, ສະເລ່ຍໃສ່ຫົວຄົນໄດ້ 16.855 ລ້ານກີບ ຫຼື ເທົ່າກັບ 2.040 ໂດລາສະຫະລັດ/ຄົນ/ປີ (ຫ້ອງວ່າການເມືອງສອງຄອນ, 2021), ສາລັບແຜນທີ່ທີ່ຕັ້ງພື້ນທີ່ການສຶກສາແມ່ນສະແດງອອກໃນຮູບທີ 2.1.

## 2.2 ຮູບແບບການສຶກສາ

ການສຶກສາໃນຄັ້ງນີ້ ແມ່ນແບບປະລິມານໂດຍແມ່ນນໍາໃຊ້ແບບຈໍາລອງທາງເສດຖາມິຕິເຂົ້າຊ່ວຍ ເພື່ອຊອກຫາປັດໄຈ ທີ່ມີຜົນກັບການສ້າງລາຍຮັບຂອງຄົວເຮືອນຂອງປະຊາຊົນ ທີ່ເຮັດການຜະລິດຫັດຖະກໍາຜ້າຝ້າຍຍ້ອມສີທໍາມະຊາດ ພາຍໃນເມືອງສອງຄອນ, ແຂວງສະຫວັນນະເຂດ.

## 2.3 ປະຊາກອນ ແລະ ກຸ່ມຕົວຢ່າງ

ເມືອງສອງຄອນ ມີຜູ້ເຮັດການຜະລິດຫັດຖະກໍາຜ້າຝ້າຍຢູ່ທັງໝົດແມ່ນ 10 ບ້ານ ມີ 708 ຄົວເຮືອນ (ຫ້ອງການອຸດສາຫະກໍາ ແລະ ການຄ້າ, 2019), ເນື່ອງຈາກກຸ່ມປະຊາກອນມີຈໍານວນຫຼາຍ ແຕ່ການຄົ້ນຄວ້າວິໄຈຄັ້ງນີ້ມີຄວາມຈໍາກັດດ້ານເວລາ ແລະ ງົບປະມານ ຈຶ່ງບໍ່ສາມາດເກັບທຸກຄົວເຮືອນໄດ້, ຈຶ່ງຈໍາເປັນກໍານົດຂະໜາດຕົວຢ່າງແທນເຊິ່ງ ໃນຄັ້ງນີ້ແມ່ນນໍາໃຊ້ການກໍານົດຕົວຢ່າງຕາມແບບວິທີຂອງ ທາໂຣ ຢາມາເນ (Yamane, 1973) ດ້ວຍລະດັບຄວາມສໍາຄັນທາງສະຖິຕິຢູ່ທີ 0.05. ສະນັ້ນ, ກຸ່ມຕົວຢ່າງທີ່ນໍາໃຊ້ເຂົ້າໃນການສຶກສາຄັ້ງນີ້ທັງໝົດແມ່ນ 256 ຄົວເຮືອນເຊິ່ງໄດ້ເກັບກໍາຈາກຄົວເຮືອນທີ່ເຮັດການຜະລິດຫັດຖະກໍາຜ້າຝ້າຍທັງໝົດ ລາຍລະອຽດສະແດງອອກດັ່ງຕາຕະລາງທີ 2.1.

## 2.4 ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ

ການສຶກສາໃນຄັ້ງນີ້ ແມ່ນຈະໄດ້ນໍາໃຊ້ແບບສອບຖາມ ເພື່ອເປັນເຄື່ອງມືຕົ້ນຕໍເຂົ້າໃນການເກັບກໍາຂໍ້ມູນ. ສໍາລັບການອອກແບບ ແບບສອບຖາມແມ່ນໄດ້ອີງໃສ່ການສຶກສາ (Souphaphone, 2020) ແຕ່ກ່ອນຈະມີການເກັບກໍາຢ່າງເປັນທາງການນັ້ນ ກໍ່ຈະມີການທົດສອບທົດລອງກ່ອນ ໃນຈໍານວນ 15 ສະບັບ, ແລ້ວໄດ້ມີການປັບປຸງໃຫ້ເໝາະສົມກັບຄວາມເປັນຈິງ ເຊິ່ງແບບສອບຖາມປະກອບມີ 4 ພາກສ່ວນຄື: 1) ຂໍ້ມູນທົ່ວໄປ, 2) ຂໍ້ມູນການຜະລິດຜ້າຝ້າຍ ແລະ ລາຍຮັບຈາກຫັດຖະກໍາຜ້າຝ້າຍຂອງຄົວເຮືອນ ແລະ 3) ຂໍ້ມູນຄວາມຄິດເຫັນອື່ນໆ.

## 2.5 ການເກັບກໍາຂໍ້ມູນ

ການສຶກສາຄັ້ງນີ້ ແມ່ນໄດ້ນໍາໃຊ້ຂໍ້ມູນປະຖົມພູມ (Primary data) ເຊິ່ງໄດ້ຈາກການເກັບກໍາລວບລວມຂໍ້ມູນຈາກການສໍາພາດປະຊາຊົນໂດຍກົງ (ແບບເຊິ່ງໜ້າ) ຕາມຄົວເຮືອນ ໃນບ້ານທີ່ມີການເຮັດຫັດຖະກໍາຜ້າຝ້າຍ ພາຍໃນເຂດເມືອງສອງຄອນ ເຊິ່ງໃນການສໍາພາດແຕ່ລະຄັ້ງແມ່ນຈະໃຊ້ເວລາປະມານ 16-18 ນາທີ/ຄົວເຮືອນ. ສໍາລັບການດໍາເນີນການເກັບກໍາຂໍ້ມູນດັ່ງກ່າວ ແມ່ນໄດ້ຈັດຂຶ້ນໃນຄັ້ງວັນທີ 25/5-15/6/2021, ໃນການເກັບກໍາຂໍ້ມູນໃນຄັ້ງນີ້ແມ່ນໄດ້ຮັບການຊ່ວຍເຫຼືອຈາກຄູອາຈານ ແລະ ນັກສຶກສາຂອງຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ ໂດຍໄດ້ມີການຈັດໃຫ້ມີການແນະນໍາກ່ຽວກັບເຄື່ອງມືຢ່າງລະອຽດກ່ອນຈະລົງເກັບກໍາຂໍ້ມູນ.

## 2.6 ການວິເຄາະຂໍ້ມູນ

ສໍາລັບການວິເຄາະຂໍ້ມູນ ແມ່ນໄດ້ນໍາໃຊ້ໂປແກຣມ STATA 13 ໂດຍແມ່ນນໍາໃຊ້ວິທີການທາງເສດຖາມິຕິນັ້ນກໍ່ຄືໃຊ້ສົມຜົນຖົດຖອຍພະຫຸຄູນ (Multiple Regression Model) ເຂົ້າໃນການໂດຍ ການປະຍຸກໃຊ້ຕາມແບບຈໍາລອງການສຶກສາຂອງ An and Richard (2015) ເຊິ່ງສາມາດຂຽນແບບຈໍາລອງຕາມວິທີກໍາລັງສອງນ້ອຍສຸດ (Ordinary Least Square: OLS) ດັ່ງນີ້:

$$\text{Income} = \beta_0 + \beta_1\text{Educ} + \beta_2\text{Experience} + \beta_3\text{Labour} + \beta_4\text{Training} + \beta_5\text{Join} + \beta_6\text{Market} + \beta_7\text{Laoskirt} + \beta_8\text{Shirt} + \beta_9\text{Tails} + \beta_{10}\text{Material} + \beta_{11}\text{Loan} + \varepsilon_t;$$

Income : ລາຍຮັບຕໍ່ເດືອນຂອງຄົວເຮືອນ (ຕົວປ່ຽນຕາມ)

$\beta_0$ : ຄ່າຄົງທີ່, $\beta_1 - \beta_{11}$ : ສາປະສິດຂອງຕົວປ່ຽນອິດສະຫຼະ

$X_{ij}$ : ຕົວປ່ຽນອິດສະຫຼະ

$\varepsilon_t$ : ຄ່າຄາດເຄື່ອນ.

ເຊິ່ງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະ ທີ່ນາໃຊ້ເຂົ້າໃນແບບຈາລອງນີ້ ແມ່ນສະແດງອອກລາຍລະອຽດດັ່ງຕາຕະລາງທີ 2.2

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນທົ່ວໄປ

ຈາກການສຶກສາເຫັນວ່າ ເພດຂອງກຸ່ມຕົວຢ່າງສ່ວນຫຼາຍແມ່ນເພດຍິງ ເຊິ່ງກວມເອົາປະມານ 97%, ອາຍຸໂດຍສະເລ່ຍແມ່ນປະມານ 48 ປີ, ລະດັບການສຶກສາໂດຍສະເລ່ຍປະມານ 7 ປີ, ປະສົບການໃນການເຮັດຫັດຖະກຳຜ້າຝ້າຍສະເລ່ຍປະມານ 11 ປີ, ມີແຮງງານໃນຄົວເຮືອນໂດຍສະເລ່ຍປະມານ 2 ຄົນ, ຜູ້ທີ່ໄດ້ຮັບການຝຶກອົບຮົມໂດຍສະເລ່ຍປະມານ 37%, ການເຂົ້າຮ່ວມກາໝາຍສິນຄ້າປະມານ 17%, ຕະຫຼາດ (ຈຳນວນພໍ່ຄ້າຄົນກາງ) ປະມານ 2 ຄົນ, ຈຳນວນແພສິ້ນທີ່ຜະລິດໄດ້ສະເລ່ຍປະມານ 38 ຜືນ/ເດືອນ/ຄົວເຮືອນ, ຈຳນວນແພເສື້ອສະເລ່ຍປະມານ 16 ຜືນ/ເດືອນ/ຄົວເຮືອນ, ຈຳນວນຜ້າແພສະເລ່ຍປະມານ 17 ຜືນ/ເດືອນ/ຄົວເຮືອນ, ຈຳນວນແພບ່ຽງສະເລ່ຍປະມານ 2 ຜືນ/ເດືອນ/ຄົວເຮືອນ, ວັດຖຸດິບເຮັດຜະລິດເອງປະມານ 5%, ກູ້ຢືມເງິນເຂົ້າໃນການຜະລິດປະມານ 6% ແລະ ລາຍໄດ້ໂດຍສະເລ່ຍຂອງຄົວເຮືອນປະມານ 2,347,491ກີບ/ເດືອນ. ເຊິ່ງລາຍລະອຽດສະແດງອອກດັ່ງຕາຕະລາງ 3.1

### 3.2 ດ້ານລາຍຮັບຈາກຜະລິດຕະພັນຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດ ຂອງປະຊາຊົນພາຍໃນເມືອງສອງຄອນ

ຈາກການສຶກສາເຫັນວ່າ ດ້ານລາຍຮັບຈາກຜະລິດຕະພັນຫັດຖະກຳຜ້າຝ້າຍຂອງຄົວເຮືອນປະຊາຊົນແມ່ນປະກອບມີ 4 ຢ່າງຄື: ແພສິ້ນ, ແພເສື້ອ, ຜ້າແພ ແລະ ແພບ່ຽງ. ເຊິ່ງສ່ວນໃຫຍ່ແມ່ນມາຈາກແພສິ້ນທີ່ສ້າງລາຍຮັບເຂົ້າຄົວເຮືອນໂດຍສະເລ່ຍແລ້ວປະມານ 2.870.508 ກີບ/ຄົວເຮືອນ/ເດືອນ ຫຼື ກວມເອົາປະມານ 41%, ຮອງລົງມາແມ່ນແພເສື້ອສ້າງລາຍຮັບເຂົ້າຄົວເຮືອນໂດຍສະເລ່ຍປະມານ 2.547.070 ກີບ/ຄົວເຮືອນ/ເດືອນ ຫຼື ກວມເອົາປະມານ 36%, ຜ້າແພສ້າງລາຍຮັບເຂົ້າຄົວເຮືອນໂດຍສະເລ່ຍປະມານ 1.488.281 ກີບ/ຄົວເຮືອນ/ເດືອນ ຫຼື ກວມເອົາປະມານ 21% ແລະ ແພບ່ຽງສາມາດສ້າງລາຍຮັບເຂົ້າຄົວເຮືອນຂອງປະຊາຊົນໂດຍສະເລ່ຍປະມານ 86.250 ກີບ/ຄົວເຮືອນ/ເດືອນ ຫຼື ກວມເອົາປະມານ 1%, ເຊິ່ງສະແດງອອກດັ່ງຕາຕະລາງ 3.2

### 3.3 ປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນທີ່ເຮັດການຜະລິດຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດຂອງປະຊາຊົນພາຍໃນເມືອງສອງຄອນ

ສຳລັບການຄາດປະມານໃນແບບຈຳລອງ (Model) ທີ່ນຳໃຊ້ຂໍ້ມູນໄຂວ່ (Cross section data) ເຂົ້າໃນການສຶກສາສ່ວນໃຫຍ່ຈະມີບັນຫາທາງເສດຖາມິຕິເກີດຂຶ້ນເປັນຕົ້ນແມ່ນບັນຫາພະຫຸສຳພັນ (Multicollinearlity) ແລະ ບັນຫາສະຫະສຳພັນ (Hetteroskedasticity), ເຊິ່ງບັນຫາເຫຼົ່ານີ້ສາມາດກວດສອບ ແລະ ແກ້ໄຂໄດ້ໃນເວລາການຄາດປະມານ.

ການກວດສອບຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະດ້ວຍກັນ ຫຼື ການກວດສອບບັນຫາພະຫຸສຳພັນຂອງບັນດາຕົວປ່ຽນອິດສະຫຼະ(Multicollinearlity)ຖ້າຫາກຕົວປ່ຽນອິດສະຫຼະຫາກມີການພົວພັນກັນສູງກວ່າ 0.6 (ສຳລັບຂໍ້ມູນໄຂວ່) ສະແດງວ່າເກີດມີບັນຫາພະຫຸສຳພັນ (Sisouphanthong et al. 2012)) ເຊິ່ງຈາກການທົດສອບໃນ ແບບຈຳລອງນີ້ດ້ວຍວິທີ Correlation Matrix ເຫັນວ່າຄ່າສູງສຸດແມ່ນ 0.49 ເຊິ່ງເປັນການພົວພັນຂອງຕົວປ່ຽນອາຍຸກັບປະສົບການແຕ່ວ່າຕ່ຳກວ່າ 0.6 ສະແດງວ່າບໍ່ມີບັນຫາດັ່ງກ່າວໃນແບບຈຳລອງນີ້.

ການກວດສອບບັນຫາຄ່າຜັນປ່ຽນ ຂອງຄ່າຄາດເຄື່ອນບໍ່ຄົງທີ່ (Hetteroskedasticity) ໃນແບບຈຳລອງນີ້ແມ່ນບໍ່ມີບັນຫາດັ່ງກ່າວ. ເຊິ່ງການຄາດປະມານຈາກກຸ່ມຕົວຢ່າງ ເຫັນວ່າ n = 256, F(11, 244) = 7.46 ແລະ Prob > F = 0.0000 ສະແດງວ່າສົມຜົນທີ່ໄດ້ຈາກການຄາດປະມານນີ້ໃຊ້ໄດ້ດ້ວຍລະດັບຄວາມສຳຄັນທາງສະຖິຕິເທົ່າກັບ 0.01.

ຄ່າ Adj R-squared = 0.2180 ໝາຍຄວາມວ່າຕົວປ່ຽນອິດສະຫຼະທັງໝົດໃນແບບຈຳລອງນີ້ ສາມາດອະທິບາຍຕົວປ່ຽນຕາມໄດ້ 21.80%.

ຈາກການຄາດປະມານດ້ວຍແບບຈໍາລອງ OLS ເຊິ່ງຜົນຂອງການສຶກສາເຫັນວ່າ ມີ 5 ປັດໄຈຄື: ປະສົບການ, ແຮງງານ, ການຝຶກອົບຮົມ, ຕະຫຼາດ ແລະ ຈໍານວນແພສິ້ນ ໄດ້ມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນຂອງປະຊາຊົນ. ສ່ວນວ່າປັດໄຈເຊັ່ນອື່ນເຊັ່ນ: ລະດັບການສຶກສາ, ການເຂົ້າຮ່ວມກາໝາຍສິນຄ້າ, ຈໍານວນແພເສື້ອ, ຈໍານວນແພບ່ຽງ, ວັດຖຸດິບ ແລະ ແຫຼ່ງງົບປະມານ ແມ່ນບໍ່ມີຜົນຕໍ່ກັບການສ້າງຮັບຂອງຄົວເຮືອນຂອງປະຊາຊົນ. ເຊິ່ງລາຍລະອຽດສະແດງອອກດັ່ງຕາຕະລາງທີ 3.3.

## 4. ວິພາກຜົນ

ຈາກຜົນຂອງການສຶກສາທີ່ໄດ້ຄາດປະມານອອກມານັ້ນ ແມ່ນຈະໄດ້ມີການວິພາກດັ່ງລາຍລະອຽດລຸ່ມນີ້:

ປະສົບການ (experience) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ຄື ມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສໍາຄັນໃນລະດັບ 0.01. ໝາຍຄວາມວ່າ ປະສົບການແມ່ນມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນຖ້າກໍານົດໃຫ້ປັດໄຈອື່ນໆຄົງທີ່ສາມາດອະທິບາຍວ່າຖ້າຫາກປະຊາຊົນມີປະສົບການເພີ່ມຂຶ້ນ 1 ປີ ແມ່ນຈະສ້າງລາຍຮັບເພີ່ມຂຶ້ນປະມານ 29.717 ກີບ. ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ (Geetika Varshneya, 2017; Maboudou Alidou and Niehof, 2020) ທີ່ສຶກສາກ່ຽວກັບ Antecedents to organic cotton clothing purchase behaviour: study on Indian youth ແລະ Responses of Rural Households to the Cotton Crisis in Benin ທີ່ພົບວ່າມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິເຊັ່ນກັນ. ແຕ່ກົງກັນຂ້າມກັບຜົນການສຶກສາຂອງ (Souphaphone, 2020) ທີ່ສຶກສາກ່ຽວກັບສຶກສາປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນທີ່ເຮັດການຜະລິດຫັດຖະກໍາຜ້າຝ້າຍຍ້ອມສີທໍາມະຊາດຂອງປະຊາຊົນບ້ານລະຫານໍ້າ ທີ່ພົບວ່າມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແຕ່ບໍ່ຜ່ານການທົດສອບທາງສະຖິຕິ.

ແຮງງານ (labour) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ຄື ມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສໍາຄັນໃນລະດັບ 0.05. ໝາຍຄວາມວ່າ ແຮງງານແມ່ນມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນ ຖ້າກໍານົດໃຫ້ປັດໄຈອື່ນໆຄົງທີ່ສາມາດອະທິບາຍວ່າ ຖ້າຫາກປະຊາຊົນຄົວເຮືອນທີ່ມີແຮງງານເພີ່ມຂຶ້ນ 1 ຄົນ ຈະເຮັດໃຫ້ມີລາຍຮັບເພີ່ມຂຶ້ນປະມານ 252.956 ກີບ. ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ ( Souphaphone, 2020; Maboudou Alidou and Niehof, 2020) ທີ່ສຶກສາກ່ຽວກັບສຶກສາປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນທີ່ເຮັດການຜະລິດຫັດຖະກໍາຜ້າຝ້າຍຍ້ອມສີທໍາມະຊາດຂອງປະຊາຊົນບ້ານລະຫານໍ້າ ແລະ Responses of Rural Households to the Cotton Crisis in Benin ທີ່ພົບວ່າມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິເຊັ່ນກັນ. ແຕ່ກົງກັນຂ້າມກັບຜົນການສຶກສາຂອງ (Sharif Chaudhry & Bashir Khan, 2009) ທີ່ສຶກສາກ່ຽວກັບ Factors Affecting Cotton Production in Pakistan: Empirical Evidence from Multan District ທີ່ບໍ່ຜ່ານການທົດສອບທາງສະຖິຕິ.

ການຝຶກອົບຮົມ (tranning) ແມ່ນບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ຄືມີການພົວພັນໃນທິດທາງກົງກັນຂ້າມກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສໍາຄັນໃນລະດັບ 0.1. ໝາຍຄວາມວ່າ ການຝຶກອົບຮົມແມ່ນມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນ ຖ້າກໍານົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກຄົວເຮືອນໃດຫາກໄດ້ເຂົ້າຮ່ວມການຝຶກອົບຮົມ ຈະເຮັດໃຫ້ມີລາຍຮັບຈາກຜະລິດຕະພັນຜ້າຝ້າຍຫຼຸດລົງ ປະມານ 465.627 ກີບ. ເຊິ່ງຜົນຂອງການສຶກສານີ້ແມ່ນອາດສະທ້ອນໃຫ້ເຫັນວ່າຜູ້ທີ່ຜ່ານການຝຶກອົບມີຄວາມຮູ້ເພີ່ມຂຶ້ນອາດໄດ້ໄປເຮັດໜ້າທີ່ອື່ນແທນເຊັ່ນວ່າ: ການໄປເຄື່ອນເຜີຍແຜ່ເປັນວິທະຍາກອນຝຶກອົບຮົມໃຫ້ຄົວເຮືອນອື່ນໆ ຫຼື ບ້ານອື່ນໆ ທີ່ມີຄວາມຕ້ອງການ ຫຼື ໄປຮ່ວມໂຄງການກ່ຽວກັບການຝຶກທັກສະໃຫ້ກຸ່ມອື່ນໆ ເຊິ່ງຈະມີລາຍຮັບຈາກສ່ວນນັ້ນແທນ.

ຕະຫຼາດ (market) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ຄືມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິ ດ້ວຍລະດັບຄວາມສໍາຄັນໃນລະດັບ 0.1. ໝາຍຄວາມວ່າ ຕະຫຼາດ ຫຼື ຈໍານວນພໍ່ຄ້າຄົນກາງແມ່ນມີຜົນຕໍ່ກັບການສ້າງ

ລາຍຮັບ ຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກປະຊາຊົນ ມີຕະຫຼາດ ຫຼື ພໍ່ຄ້າຄົນກາງເພີ່ມຂຶ້ນ 1 ຄົນ ຈະເຮັດມີລາຍຮັບຂອງຄົວເຮືອນເພີ່ມຂຶ້ນປະມານ 228.280 ກີບ. ເຊິ່ງຜົນຂອງການສຶກສາສະແດງໃຫ້ເຫັນວ່າ ຕະຫຼາດແມ່ນປັດໄຈສຳຄັນອີກອັນໜຶ່ງ ຖ້າຫາກມີການຜະລິດກໍ່ຈຳເປັນຕ້ອງມີຕະຫຼາດຈຳໜ່າຍແລ້ວສິ່ງຜົນເຮັດໃຫ້ລາຍຮັບຂອງຄົວເຮືອນເພີ່ມຂຶ້ນ ແລະຜົນຂອງການສຶກສານີ້ແມ່ນກົງກັນຂ້າມກັບການສຶກສາຂອງ (Souphaphone, 2020) ທີ່ສຶກສາກ່ຽວກັບສຶກສາປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນທີ່ເຮັດການຜະລິດຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດຂອງປະຊາຊົນບ້ານລະຫານໍ້າ ທີ່ພົບວ່າດ້ານຕະຫຼາດມີການພົວກັນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນແຕ່ບໍ່ຜ່ານການທົດສອບທາງສະຖິຕິ.

ຈຳນວນແພສິ້ນ (Lao Skirt) ແມ່ນເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ຄືມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິດ້ວຍລະດັບຄວາມສຳຄັນໃນລະດັບ 0.01. ໝາຍຄວາມວ່າ ຖ້າຄົວເຮືອນເຮັດແພສິ້ນ ແມ່ນມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນ ຖ້າກຳນົດໃຫ້ປັດໄຈອື່ນຄົງທີ່ສາມາດອະທິບາຍວ່າ ຖ້າຫາກຄົວເຮືອນມີຈຳນວນແພສິ້ນເພີ່ມຂຶ້ນ 1 ຜືນ ຈະມີລາຍຮັບຂອງຄົວເຮືອນເພີ່ມຂຶ້ນປະ ມານ 23.965 ກີບ. ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ (Souphaphone, 2020) ທີ່ສຶກສາກ່ຽວກັບສຶກສາປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນທີ່ເຮັດການຜະລິດຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດຂອງປະຊາຊົນບ້ານລະຫານໍ້າ ທີ່ພົບວ່າດ້ານຈຳ ນວນແພສິ້ນມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ ແລະ ຜ່ານການທົດສອບທາງສະຖິຕິເຊັ່ນກັນ.

ສ່ວນວ່າປັດໄຈດ້ານ ລະດັບການສຶກສາ, ຈຳນວນແພເສື່ອ, ວັດຖຸດິບ ແລະ ແຫຼ່ງງົບປະມານ ມີການພົວພັນໃນທິດທາງດຽວກັນກັບລາຍຮັບຂອງຄົວເຮືອນ. ສຳລັບການເຂົ້າຮ່ວມກາໝາຍສິນຄ້າ ແລະ ຈຳນວນແພບ່ຽງ ແມ່ນມີການພົວພັນໃນທິດທາງກົງກັນຂ້າມກັນກັບລາຍຮັບຂອງຄົວເຮືອນ ແຕ່ວ່າທຸກຕົວປ່ຽນທີ່ກ່າວມາຂ້າງເທິງນີ້ແມ່ນບໍ່ມີຄວາມສຳຄັນທາງສະຖິຕິ (Insignifecance) ຫຼື ບໍ່ມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນຂອງປະຊາຊົນ.

## 5. ສະຫຼຸບ

ໃນການສຶກສາປັດໄຈທີ່ມີຜົນຕໍ່ການສ້າງລາຍຮັບຂອງຄົວເຮືອນ ຈາກການຜະລິດຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດຂອງປະຊາຊົນພາຍໃນເມືອງສອງຄອນ ແຂວງສະຫວັນນະເຂດ ແມ່ນໄດ້ນຳໃຊ້ຂໍ້ມູນຕັດຂວາງ ທີ່ໄດ້ຈາກ 256 ຄົວເຮືອນ ຢູ່ເມືອງສອງຄອນ ໂດຍໄດ້ນຳໃຊ້ວິທີສະຖິຕິພັນລະນາ ແລະ ໃຊ້ແບບຈຳລອງ OLS.

ຈາກການສຶກສາເຫັນວ່າ ດ້ານລາຍຮັບຈາກຜະລິດຕະພັນຫັດຖະກຳຜ້າຝ້າຍຂອງຄົວເຮືອນປະຊາຊົນແມ່ນປະກອບມີ 4 ຢ່າງຄື: ແພສິ້ນ, ແພເສື່ອ, ຜ້າແພ ແລະ ແພບ່ຽງ. ໂດຍສ້າງລາຍຮັບໂດຍສະເລ່ຍຈາກຜະລິດຕະພັນຫັດຖະກຳຜ້າຝ້າຍທັງໝົດ ຂອງຄົວເຮືອນ 6.992.109 ກີບ/ຄົວເຮືອນ/ເດືອນ ເຊິ່ງໃນນັ້ນສ່ວນໃຫຍ່ແມ່ນມາຈາກແພສິ້ນທີ່ສ້າງລາຍຮັບເຂົ້າຄົວເຮືອນໂດຍສະເລ່ຍແລ້ວປະມານ 2.870.508 ກີບ/ຄົວເຮືອນ/ເດືອນ ຫຼື ກວມເອົາປະມານ 41% ແລະ ສ່ວນທີ່ສ້າງລາຍຮັບໜ້ອຍກວ່າໝູ່ແມ່ນພາກສ່ວນແພບ່ຽງທີ່ສາມາດສ້າງລາຍຮັບໂດຍສະເລ່ຍປະ ມານ 86.250 ກີບ/ຄົວເຮືອນ/ເດືອນ ຫຼື ກວມເອົາປະມານ 1%.

ສຳລັບປັດໄຈທີ່ມີຕໍ່ກັບການສ້າງລາຍຮັບຂອງຄົວເຮືອນ ຈາກການຜະລິດຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດຂອງປະຊາຊົນ ຈາກການຄາດປະມານດ້ວຍແບບຈຳລອງ OLS ເຊິ່ງຜົນຂອງການສຶກສາເຫັນວ່າ ມີ 5 ປັດໄຈຄື: ປະສົບການ, ແຮງງານ, ການຝຶກອົບຮົມ, ຕະຫຼາດ ແລະ ຈຳນວນແພສິ້ນ ໄດ້ມີຜົນຕໍ່ກັບການສ້າງລາຍຮັບຂອງຄົວເຮືອນຂອງປະຊາຊົນ.

ສ່ວນວ່າປັດໄຈທີ່ບໍ່ມີຜົນຕໍ່ກັບກັບລາຍໄດ້ ຂອງປະຊາຊົນຢູ່ນະຄອນໄກສອນພົມວິຫານ ປະກອບມີ: ລະດັບການສຶກສາ, ຈຳນວນແພເສື່ອ, ວັດຖຸດິບ ແລະ ແຫຼ່ງງົບປະມານ ບັນດາຕົວປ່ຽນດັ່ງກ່າວນັ້ນ ບໍ່ຜ່ານການທົດສອບທາງສະຖິຕິໃນລະດັບທີ່ຍອມຮັບໄດ້ ສະແດງວ່າມີລະດັບຄວາມສຳຄັນທາງສະຖິຕິສູງກວ່າ 0.1 ນັ້ນເອງ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດ ກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງຂ້າພະເຈົ້າ ມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

ກະຊວງແຜນການ ແລະ ການລົງທຶນ. 2016. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ຂອງ ສປປ ລາວ, ກະຊວງແຜນການ ແລະ ການລົງທຶນ, ນະຄອນຫຼວງວຽງຈັນ, ສປປ ລາວ.

ພະແນກແຜນການ ແລະ ການລົງທຶນ. 2021. ສະຫຼຸບແຜນພັດທະນາເສດຖະກິດ–ສັງຄົມ ໝົດປີ 2020 ແລະ ແຜນປະຈໍາປີ 2021 ຂອງແຂວງສະຫວັນນະເຂດ. ພະແນກແຜນການ ແລະ ການລົງທຶນ ແຂວງສະຫວັນນະເຂດ.

ພະແນກອຸດສະຫະກໍາ ແລະ ການຄ້າ. 2019. ບັນຊີກຸ່ມຜະລິດສິນຄ້າໂອດອບ ແຫ່ງຊາດ ຂອງແຂວງສະຫວັນນະເຂດ (14 ຫົວໜ່ວຍ 56 ຜະລິດຕະພັນ). ຂະແໜງສົ່ງເສີມ ວນກ ແລະ ການຄ້າ. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ ສະຫວັນນະເຂດ.

ຫ້ອງການອຸດສາຫະກໍາ ແລະ ການຄ້າ. 2019. ບົດລາຍງານໂດຍສັງເຂບການຈັດຕັ້ງປະຕິບັດວຽກງານ ສົ່ງເສີມສິນຄ້າ" ໜຶ່ງເມືອງໜຶ່ງຜະລິດຕະພັນ"  ODOP ໃນໄລຍະຜ່ານມາ. ໜ່ອຍງານສົ່ງເສີມ ວນກ ແລະ ການຄ້າ. ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງສອງຄອນ. ແຂວງສະຫວັນນະເຂດ.

ຫ້ອງວ່າການເມືອງສອງຄອນ. 2021. ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຮອບດ້ານ 6 ເດືອນຕົ້ນປີ 2021 ແລະ ວາງທິດທາງແຜນການສູ້ຊົນ 6 ເດືອນທ້າຍປີ 2021 ຂອງເມືອງສອງຄອນ. ເມືອງສອງຄອນ. ແຂວງສະຫວັນນະເຂດ.

ແຜນທີ່ເມືອງສອງຄອນ. 2021. https://gadm.org/maps/LAO/savannakhet/songkhone.html. (ເຂົ້າເບິ່ງຄັ້ງວັນທີ04/09/2021)

**ຮູບທີ 2.1**: ແຜນທີ່ເມືອງສອງຄອນ, ແຂວງສະຫວັນນະເຂດ

Geetika Varshneya, A. K. (2017). Antecedents to organic cotton clothing purchase behaviour: A study on Indian youth, Journal of Fashion Marketing and Management: An International Journal, 21 (1), 1–37.

Maboudou Alidou, G and Niehof, A. (2020). Responses of Rural Households to the Cotton Crisis in Benin. *Journal of Sustainability* 2020, *12*, 4207; doi: 10.3390/su12104207

Sharif Chaudhry, I. & Bashir Khan, M. (2009). Factors Affecting Cotton Production in Pakistan: Empirical Evidence from Multan District, *Journal of Quality and Technology Management. 5 (11). 91-100.*

Sisouphanthong, V., Sensouphab, C., Inthakesone, B., Bouyalasy, M. & Sipasert, K. (2012). Econometric1. Faculty of Economic and Business Management, University of Laos. Vientiane. Lao PDR.

Sonoe, M. (2005). The Outlook for Cotton Production and its Ecological Aptitudes in the Lao PDR. Macroeconomic Policy Support for Socio-Economic Development in the Lao PDR. The Committee for the Planning and Investment of the Lao People's Democratic Republic. Japan International Cooperation Agency. 2 (2). 196-212.

Souphaphone, S. (2020). Study on Factors Affecthing Household's income generation from Natural Dyed Cotton Production in Lahanam Village. Faculty of Economics and Business Management, National University of Laos. Vientiane, Lao PDR.

Yamane, T. (1973). Statistics: An Introductory Analysis (3rd Ed.). New York: Harpe.




ແຫຼ່ງຂໍ້ມູນ: https://gadm.org/maps/LAO/savannakhet/songkhone.html

**ຕາຕະລາງທີ 2.1**: ປະຊາກອນ ແລະ ກຸ່ມຕົວຢ່າງ

| ລ/ດ | ບ້ານ | ປະຊາກອນ (ຄົວເຮືອນ) | ກຸ່ມຕົວຢ່າງ (ຄົວເຮືອນ) |
|---|---|---|---|
| 1 | ບ້ານລະຫານ້ຳ | 340 | 123 |
| 2 | ບ້ານທ່າຂາມລຽນ | 130 | 47 |
| 3 | ບ້ານແບ່ງຄຳໄຫຼ | 70 | 25 |
| 4 | ບ້ານມ່ວງໄຂ່ | 58 | 21 |
| 5 | ບ້ານລະຫາໂຄກ | 42 | 15 |
| 6 | ບ້ານໜອງໄຮ | 10 | 4 |
| 7 | ບ້ານນາກາລາ | 24 | 9 |
| 8 | ບ້ານກຸດຣີ | 19 | 7 |
| 9 | ບ້ານນາຫັງ | 10 | 4 |
| 10 | ບ້ານຜັກຂະ | 5 | 2 |
| ລວມ | | 708 | 256 |

ແຫຼ່ງຂໍ້ມູນ: ຫ້ອງການອຸດສາຫະກຳ ແລະ ການຄ້າ, 2019 ແລະ ການຄຳນວນຂອງທີມງານວິໄຈ.

**ຕາຕະລາງທີ 2.2:** ບັນດາຕົວປຽນ, ຄຳນິຍາມຂອງຕົວປ່ຽນ, ຫົວໜ່ວຍວັດແທກ, ຄວາມສຳພັນ ແລະ ແຫຼ່ງທີ່ມາຕົວປ່ຽນ

| ຕົວປຽນ | ຄວາມໝາຍ | ຫົວໜ່ວຍວັດແທກ | ຄວາມສຳພັນ | ແຫຼ່ງທີ່ມາຕົວປ່ຽນ |
|---|---|---|---|---|
| ຕົວປ່ຽນຕາມ | | | | |
| Income | ລາຍໄດ້ຂອງຄົວເຮືອນ | ກີບ/ເດືອນ | | |
| ຕົວປ່ຽນອິດສະຫຼະ ($X_{ij}$) | | | | |
| Educ | ລະດັບການສຶກສາ | ປີ | + | Maboudou Alidou and Niehof, 2020 |
| Experience | ປະສົບການ | ປີ | + | Geetika Varshneya, 2017 |
| Labour | ຈຳນວນແຮງງານ | ຄົນ | + | Sharif Chaudhry & Bashir Khan, 2009 |
| Training | ການໄດ້ເຂົ້າຝຶກອົບຮົມ | ເຄີຍ=1; ບໍ່ເຄີຍ=0 | + | ຜູ້ສຶກສາ |
| Join | ການເຂົ້າກຸ່ມການໝາຍສິນຄ້າ | ເຂົ້າກຸ່ມ=1; ບໍ່ເຂົ້າກຸ່ມ=0 | + | Souphaphone, 2020 |

| | | | | |
|---|---|---|---|---|
| Market | ຕະຫຼາດຈຳໜ່າຍ | ຈຳນວນພໍ່ຄ້າຮັບຊື້ | + | Souphaphone, 2020 |
| Laoskirt | ປະລິມານການຜະລິດສິ້ນ | ຜືນ | + | ຜູ້ສຶກສາ |
| Shirt | ປະລິມານການຜະລິດເສື້ອ | ຜືນ | + | ຜູ້ສຶກສາ |
| Tails | ປະລິມານການຜະລິດແພບ່ຽງ | ຜືນ | + | ຜູ້ສຶກສາ |
| Material | ວັດຖຸດິບ | −ເຮັດເອງ=1; ອື່ນໆ=0 | + | Souphaphone, 2020 |
| Loan | ກູ້ຢືມເງິນໃຊ້ເຂົ້າການຜະລິດ | ໄດ້ກູ້=1; ບໍ່ໄດ້ກູ້=0 | + | Souphaphone, 2020 |
| ໝາຍເຫດ | ເຄື່ອງໝາຍ (+) : ຕົວປ່ຽນອິດສະຫຼະມີການພົວພັນໃນທິດທາງດຽວກັນກັບລາຍຮັບ | | | |

ແຫຼ່ງຂໍ້ມູນ: ລວບລວມໂດຍທີມງານວິໄຈ.

**ຕາຕະລາງ 3.1:** ດ້ານຂໍ້ມູນທົ່ວໄປ

| ລາຍການ | |
|---|---|
| ເພດຍິງ (%) | 97.50 |
| ອາຍຸ (ປີ) | 48.75 |
| ລະດັບການສຶກສາ (ປີ) | 7.16 |
| ປະສົບການ (ປີ) | 11.02 |
| ຈຳນວນແຮງງານ (ຄົນ) | 2.09 |
| ການຝຶກອົບຮົມ (%) | 37.11 |
| ການເຂົ້າຮ່ວມກາໝາຍສິນຄ້າ (%) | 17.19 |
| ຕະຫຼາດ (ຈຳນວນພໍ່ຄ້າຄົນກາງ) (ຄົນ) | 2.16 |
| ຈຳນວນແພສິ້ນ (ຜືນ) | 38.21 |
| ຈຳນວນແພເສື້ອ (ຜືນ) | 16.58 |
| ຈຳນວນຜ້າແພ (ຜືນ) | 17.03 |
| ຈຳນວນແພບ່ຽງ (ຜືນ) | 2.25 |
| ວັດຖຸດິບເຮັດຜະລິດເອງ (%) | 5.47 |
| ກູ້ຢືມເງິນເຂົ້າໃນການຜະລິດ (%) | 6.27 |
| ລາຍຮັບຂອງຄົວເຮືອນ (ກີບ/ເດືອນ) | 2,347,491 |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດດ້ວຍແບບສອບຖາມ, 25/5-15/6/2021 ແລະ ການຄຳນວນ/ວິເຄາະໂດຍທີມງານວິໄຈ.

**ຕາຕະລາງ 3.2:** ດ້ານລາຍຮັບຈາກການຜະລິດຫັດຖະກຳຜ້າຝ້າຍຍ້ອມສີທຳມະຊາດ ຂອງຄົວເຮືອນພາຍໃນເມືອງສອງຄອນ

| ປະເພດລາຍຮັບຈາກຜະລິດຕະພັນຜ້າຝ້າຍ | ລາຍຮັບທັງໝົດຂອງກຸ່ມຕົວຢ່າງຈາກຜະລິດຕະພັນຜ້າຝ້າຍ (ກີບ) | ລາຍຮັບສະເລ່ຍ/ຄົວເຮືອນ/ເດືອນ (ກີບ) | ສ່ວນຮ້ອຍ (%) |
|---|---|---|---|
| ແພສິ້ນ | 734,850,000 | 2,870,508 | 41.05 |
| ແພເສື້ອ | 652,050,000 | 2,547,070 | 36.43 |
| ຜ້າແພ | 381,000,000 | 1,488,281 | 21.29 |
| ແພບ່ຽງ | 22,080,000 | 86,250 | 1.23 |
| ລວມ | 1,789,980,000 | 6,992,109 | 100.00 |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດດ້ວຍແບບສອບຖາມ, 25/5-15/6/2021 ແລະ ການຄຳນວນ/ວິເຄາະໂດຍທີມງານວິໄຈ.

**ຕາຕະລາງທີ 3.3:** ການພົວພັນຕົວປ່ຽນໃນແບບຈຳລອງຕໍ່ກັບການສ້າງລາຍຮັບຂອງຄົວເຮືອນ ຢູ່ເມືອງສອງຄອນ

| ຕົວປ່ຽນອິດສະຫຼະ | Coeficent | Std. Err. | t | Prob |
|---|---|---|---|---|
| ລະດັບການສຶກສາ (Educ) | 40,399.83ns | 28372.71 | 1.42 | 0.156 |
| ປະສົບການ (Experience) | 29,717.54*** | 10477.37 | 2.84 | 0.005 |
| ຈຳນວນແຮງງານ (Labour) | 252,956.70** | 126126.2 | 2.01 | 0.046 |
| ການຝຶກອົບຮົມ (Tranning) | -465,627* | 250848.2 | -1.86 | 0.065 |
| ການເຂົ້າກຸ່ມກາໝາຍສິນຄ້າ (Join) | -369,665ns | 277888.5 | -1.33 | 0.185 |
| ຕະຫຼາດ (Market) | 228,280.70* | 121233.6 | 1.88 | 0.061 |
| ຈຳນວນແພສິ້ນ (Lao Skirt) | 23,965.67*** | 4628.358 | 5.18 | 0.000 |
| ຈຳນວນແພເສື້ອ (Shirt) | 1,747.963ns | 2577.594 | 0.68 | 0.498 |
| ຈຳນວນແພບ່ຽງ (Tails) | -532.37ns | 7331.905 | -0.07 | 0.942 |
| ວັດຖຸດິບ (Material) | 236,693ns | 431311 | 0.55 | 0.584 |
| ການກູ້ຢືມເງິນໃຊ້ໃນການຜະລິດ(Loan) | 363,430.90ns | 392940.4 | 0.92 | 0.356 |
| ຄ່າຄົງທີ່ (cons) | -315,433ns | 774322.8 | -0.41 | 0.684 |
| n = 256, F( 11, 244) = 7.46, Prob > F = 0.0000, Adj R-squared = 0.2180, | | | | |
| ໝາຍເຫດ: * ມີລະດັບຄວາມສຳຄັນ 0.1; ** ມີລະດັບຄວາມສຳຄັນ 0.05; *** ມີລະດັບຄວາມສຳຄັນ 0.01 ແລະ ns ແມ່ນບໍ່ມີຄວາມສຳຄັນທາງສະຖິຕິ. | | | | |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດດ້ວຍແບບສອບຖາມ, 25/5-15/6/2021 ແລະ ການຄຳນວນ/ວິເຄາະໂດຍທີມງານວິໄຈ.